บໍລິສັດ ດັກລັກ ຣັບເບີ ຈຳກັດ
DAKLAORUCO
**DAK LAK RUBBER COMPANY.,LTD (DAKLAORUCO)**
**Address: Thaluong Village - Pakse District - Champasak Province - Lao PDR**
**Tel: 00856 31 21 25 70; Fax: 00856 31 25 29 82**
**Email: daklaoruco.lao@gmail.com Website: http://www.daklaoruco.com**

ເລກທີ: 02 /ລງ- FSC *ປາກເຊ, ວັນທີ 20 ເດືອນ 01 ປີ 2025*

# ບົດລາຍງານ
## ວ່າດ້ວຍການຈັດຕັ້ງປະຕິບັດກົດລະບຽບຄວາມສະເໝີພາບຍິງ-ຊາຍ ແລະ ການສ້າງວຽກເຮັດງານທຳ ປີ 2024

- ອີງຕາມກົດໝາຍວ່າດ້ວຍ ແຮງງານ ສະບັບເລກທີ 43/ສພຊ (ສະບັບປັບປຸງ) ລົງວັນທີ 24/12/2013 ອອກໂດຍສະພາແຫ່ງຊາດ ຂອງ ສປປ ລາວ;
- ອີງຕາມມາດຕະຖານແຫ່ງຊາດສະບັບ ຊົ່ວຄາວສຳລັບການປະເມີນປ່າໄມ້ ຂອງ ສປປ ລາວ (FSC-STD-LAO-01-2020);
- ອີງຕາມກົດລະບຽບເລກທີ 07/ລບ- ບສ ລົງວັນທີ 27/6/2023 ຂອງຜູ້ອຳນວຍການບໍລິສັດ ວ່າດ້ວຍ ຄວາມສະເໝີພາບຍິງ-ຊາຍ ແລະ ການສ້າງວຽກເຮັດງານທຳ;
- ອີງຕາມກົດລະບຽບເລກທີ 06/ ລບ- ບສ ລົງວັນທີ 27/6/2023 ຂອງຜູ້ອຳນວຍການບໍລິສັດ ວ່າດ້ວຍກົນໄກຮັບ ແລະ ແກ້ໄຂໜັງສືຮ້ອງຮຽນ, ປະກອບຄຳເຫັນຂອງພາກສ່ວນທີ່ກ່ຽວຂ້ອງ;
- ອີງຕາມບົດບາດແລະໜ້າທີ່ ຂອງຄະນະ FSC ຂອງບໍລິສັດ;
- ອີງຕາມສະພາບຕົວຈິງຢູ່ທີ່ ບໍລິສັດ.

ຄະນະ FSC ຂອງບໍລິສັດລາຍງານກ່ຽວກັບການຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍ ຄວາມສະເໝີພາບຍິງ-ຊາຍ ແລະ ການສ້າງວຽກເຮັດງານທຳ ປີ 2024 ດັ່ງຕໍ່ໄປນີ້:

ເພື່ອຮັບປະກັນສິດ, ພັນທະ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານ, ຮັບປະກັນການເຄື່ອນໄຫວບໍລິຫານຂອງບໍລິສັດປະຕິບັດຕາມກົດໝາຍ ແລະ ສົນທິສັນຍາສາກົນ, ກໍຄືປະຕິບັດຕາມມາດຕະຖານແຫ່ງຊາດສະບັບຊົ່ວຄາວສຳລັບການປະເມີນປ່າໄມ້ຢູ່ ສປປ ລາວ (FSC-STD-LAO-01 - 2020 EN). ບໍລິສັດໄດ້ອອກກົດລະບຽບເລກທີ 07/ ລບ- ບສ ລົງວັນທີ 27/6/2023 ຂອງຜູ້ອຳນວຍການບໍລິສັດ ວ່າດ້ວຍ ຄວາມສະເໝີພາບຍິງ-ຊາຍ ແລະ ການສ້າງວຽກເຮັດງານທຳ.

**1. ຜົນການຈັດຕັ້ງປະຕິບັດກົດລະບຽບ:**

**1.1 ຈັດຕັ້ງປະຕິບັດການເຜີຍແຜ່, ໂຄສະນາໃຫ້ພະນັກງານກຳມະກອນ, ຜູ້ອອກແຮງງານທຸກຄົນຮັບຮູ້ກ່ຽວກັບ:**

***1.1.1. ເນື້ອໃນກ່ຽວກັບ ຄວາມສະເໝີພາບຍິງ-ຊາຍ ແລະ ການສ້າງວຽກເຮັດງານທຳ***

- ຄວາມສະເໝີພາບ ຍິງ-ຊາຍ ໝາຍຄວາມວ່າ ຜູ້ຊາຍ ແລະ ແມ່ຍິງມີຕຳແໜ່ງ ແລະ ບົດບາດເທົ່າທຽມກັນ,ໄດ້ຮັບເງື່ອນໄຂ ແລະ ໂອກາດໃນການພັດທະນາຄວາມສາມາດຂອງຕົນໃນທຸກວຽກງານການຄຸ້ມຄອງປ່າໄມ້ຂອງບໍລິສັດ ແລະ ໄດ້ຮັບຜົນປະໂຫຍດເທົ່າທຽມກັນ.
- ຄວາມສະເໝີພາບທາງດ້ານການເມືອງ: ຜູ້ອອກແຮງງານມີສິດເຂົ້າຮ່ວມ ແລະ ສະໝັກເລືອກຕັ້ງໃນທຸກອົງການຈັດຕັ້ງທາງການເມືອງ, ສັງຄົມທີ່ເຄື່ອນໄຫວຖືກຕ້ອງຕາມກົດໝາຍ. ຄວາມສະເໝີພາບທາງດ້ານມາດຕະຖານ ໃນການທາບທາມ ແລະ ແຕ່ງຕັ້ງໃຫ້ເປັນຕຳແໜ່ງດຽວກັນ ແລະ ຕຳແໜ່ງບໍລິຫານຂອງບໍລິສັດ ລວມທັງກົດ

ຈະກຳຕ່າງໆ ເຊັ່ນ: ການຝຶກອົບຮົມ, ກອງປະຊຸມ, ສຳມະນາ, ເວທີປາໄສ ແລະ ອື່ນໆ.

- ຄວາມສະເໝີພາບທາງດ້ານແຮງງານ ແລະ ວຽກເຮັດງານທຳ

+ ບໍ່ຮັບສະໝັກແຮງງານເດັກທີ່ມີອາຍຸຕ່ຳກວ່າ 18 ປີ,

+ ບໍ່ມີການໃຊ້ແຮງງານແບບບັງຄັບ

+ ຄວາມສະເໝີພາບທາງດ້ານມາດຕະຖານ ແລະ ເກນອາຍຸຮັບສະໝັກ. ຄວາມສະເໝີພາບທາງດ້ານວຽກເຮັດງານທຳ, ຄ່າແຮງງານ, ເງິນໂບນັດ, ປະກັນສັງຄົມ, ສະພາບການເຮັດວຽກ .... ຮັບປະກັນກ່ຽວກັບຈຳນວນແຮງງານຕ່າງປະເທດບໍ່ເກີນ 15% ຂອງຈຳນວນແຮງງານລາວທັງໝົດ.

- ຄວາມສະເໝີພາບທາງດ້ານວັດທະນະທຳ, ການສຶກສາ, ການຝຶກອົບຮົມ, ວິທະຍາສາດ ແລະ ເຕັກໂນໂລຊີ

+ ຄວາມສະເໝີພາບໃນການຝຶກອົບຮົມວິຊາສະເພາະ ແລະ ການເຂົ້າເຖິງວິທະຍາສາດ ເຕັກໂນໂລຊີ.

+ ໃນການມ່ວນຊື່ນແລະການເຂົ້າຮ່ວມກິດຈະກຳວັດທະນະທຳ, ສັງຄົມ, ທາງດ້ານຮ່າງກາຍແລະກິລາ.

- ຄວາມສະເໝີພາບທາງດ້ານສຸຂະພາບ ແລະ ຄວາມປອດໄພແຮງງານ.

+ ຄວາມສະເໝີພາບໃນການຝຶກອົບຮົມດ້ານສຸຂະພາບ ແລະ ຄວາມປອດໄພແຮງງານ.

+ ຄວາມສະເໝີພາບໃນການເບິ່ງແຍງ ແລະ ຕິດຕາມສຸຂະພາບ, ຮັບອຸດໜູນເກີດລູກ.

- ຄວາມສະເໝີພາບສ່ວນບຸກຄົນໃນວຽກງານຄຸ້ມຄອງປ່າໄມ້ຂອງບໍລິສັດ: ໂດຍບໍ່ມີການຈຳແນກ, ຍົກເວັ້ນ ຫຼື ບຸລິມະສິດໂດຍອີງໃສ່ເຊື້ອຊາດ, ສີຜິວ, ຕົ້ນກຳເນີດຂອງຊາດ, ຊົນເຜົ່າ, ເພດ, ເກນອາຍຸ, ສາດສະໜາ, ພິການ… ໃນການເຮັດວຽກ ຫຼື ອາຊີບ.

### *1.1.2 ມາດຕະການຈັດຕັ້ງປະຕິບັດຄວາມສະເໝີພາບຍິງ-ຊາຍ ແລະ ການສ້າງວຽກເຮັດງານ*

- ຄວາມສະເໝີພາບ ຍິງ-ຊາຍ ແລະ ການສ້າງວຽກເຮັດງານທຳແມ່ນໄດ້ຮັບການຕິດຕາມກວດກາ, ລາຍງານ ແລະ ປະເມີນຜົນຢ່າງເປັນປົກກະຕິໃນທຸກໆ 6 ເດືອນ ແລະ 12 ເດືອນ ເຊິ່ງເປັນພື້ນຖານໃນການດັດສົມນະໂຍບາຍຂອງບໍລິສັດເພື່ອຈັດຕັ້ງປະຕິບັດລະບຽບກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ.

- ມີລະບຽບການສະເພາະກ່ຽວກັບການຮັບສະໝັກ, ຝຶກອົບຮົມ ແລະ ນະໂຍບາຍໃນການຈັດແບ່ງວຽກງານ.

- ສ້າງເງື່ອນໄຂການເຮັດວຽກທີ່ປອດໄພ ແລະ ສຸຂະອະນາໄມໃຫ້ແກ່ຜູ້ອອກແຮງງານຍິງທີ່ເຮັດວຽກໜັກ, ຢູ່ໃນສິ່ງແວດລ້ອມທີ່ເປັນພິດ ຫຼື ອັນຕະລາຍ.

- ຊຸກຍູ້ໃຫ້ຜູ້ອອກແຮງງານຍິງເຂົ້າຮ່ວມວຽກງານຄຸ້ມຄອງປ່າໄມ້ຂອງບໍລິສັດ.

- ຫົວໜ້າຫ້ອງ, ຫົວໜ້າຈຸ, ຜູ້ອຳນວຍການນິຄົມມີໜ້າທີ່ກວດກາ ຕິດຕາມບັນດາການເຄື່ອນໄຫວ ທີ່ກ່ຽວຂ້ອງກັບຄວາມສະເໝີພາບຍິງ-ຊາຍ ແລະ ການສ້າງວຽກເຮັດງານທຳຢູ່ທີ່ໜ່ວຍງານ. (ລວມທັງຜູ້ຮັບເໝົາ). ສະກັດກັ້ນບັນດາພຶດຕິກຳທີ່ລະເມີດ. ລາຍງານໃຫ້ບໍລິສັດແກ້ໄຂໃນກໍລະນີລະເມີດເກີນສິດຂອງຕົນທີ່ຈະແກ້ໄຂ.

### *1.1.3 ມາດຕະການແກ້ໄຂການລະເມີດຄວາມສະເໝີພາບຍິງ-ຊາຍ ແລະ ການສ້າງວຽກເຮັດງານ*

- ບັນດາອົງການຈັດຕັ້ງ ແລະ ບຸກຄົນ, ເມື່ອພົບເຫັນການລະເມີດ, ຕ້ອງເຮັດບົດລາຍງານ ຫຼື ຮ້ອງຮຽນຕໍ່ຫົວໜ້າຫ້ອງການບໍລິສັດ/ ຫົວໜ້າຫ້ອງ/ ຜູ້ຮັບຜິດຊອບຫ້ອງ ບໍລິຫານ-ບຸກຄະລາກອນຂອງໜ່ວຍງານ ຫຼື ຄະນະນຳຂອງບໍລິສັດ.

- ຜູ້ຮັບຄຳຮ້ອງຮຽນເປັນເຈົ້າການໃນການຈັດຕັ້ງການສືບສວນ, ກວດພົບແລະສະເໜີມາດຕາການແກ້ໄຂ, ແລະລາຍງານຕໍ່ຄະນະນຳຂອງບໍລິສັດ/ຫນ່ວຍງານ.

- ອີງຕາມບົດລາຍງານ, ຄະນະນຳຂອງບໍລິສັດ / ໜ່ວຍງານຈະຕັດສິນໃນການບໍ່ຮັບຄຳຮ້ອງຮຽນຫຼື ດຳເນີນວິໄນຕໍ່ຜູ້ລະເມີດໂດຍອີງຕາມລະດັບ: ຕັກເຕືອນ, ວິພາກວິຈານ, ຕຳນິ, ປົດຕຳແໜ່ງ, ຍົກຍ້າຍວຽກຫຼືສະເໜີ ອົງການຈັດຕັ້ງລັດທີ່ມີສິດເປັນຜູ້ແກ້ໄຂ.

- ກໍລະນີຜູ້ຮັບເໝົາ ຫຼື ຜູ້ຮັບວຽກຖືກຮ້ອງຮຽນ, ກ່າວຫາ, ບໍລິສັດຈະແຈ້ງໃຫ້ຮັບຮູ້ ຖ້າຂໍ້ກ່າວຫາດັ່ງກ່າວ ເປັນຄວາມຈິງ, ບໍລິສັດຈະຢຸດຕິສັນຍາ, ໂຈະການບໍລິການ ຫຼື ຢຸດການຮ່ວມມື.

- ຖ້າຜູ້ຖືກຮ້ອງຮຽນ ບໍ່ເຫັນດີກັບການຕັດສິນຂອງບໍລິສັດ, ມີສິດຮ້ອງຮຽນ ຕໍ່ອົງການຈັດຕັ້ງຂອງລັດເພື່ອ ແກ້ໄຂ.

- ການກະທຳໃດໆທີ່ເກີນສິດຂອງບໍລິສັດຈະຖືກແກ້ໄຂໂດຍອົງການທີ່ມີສິດຂອງລັດ.

- ຜົນຂອງການແກ້ໄຂຄຳຮ້ອງຮຽນກ່ຽວກັບຄວາມສະເໝີພາບຍິງ-ຊາຍ ແລະ ສ້າງວຽກເຮັດງານທຳ ບໍລິ ສັດຈະເປີດເຜີຍຕໍ່ມວນຊົນ.

**1.2. ຜົນໄດ້ຮັບ**

- ໃນປີ 2024, ບໍລິສັດໄດ້ອອກນະໂຍບາຍຮັບສະໝັກ, ຝຶກອົບຮົມ, ແລະນະໂຍບາຍເງິນເດືອນສະເພາະໃນ ແຕ່ລະໄລຍະເຊັ່ນ:

+ ແຈ້ງການສະບັບເລກທີ 319/ຈກ-ບສ ລົງວັນທີ 22/06/2024 ກ່ຽວກັບນະໂຍບາຍຮັບສະໝັກແຮງ ງານຂອງບໍລິສັດ.

+ ແຈ້ງການ ສະບັບເລກທີ 05-08/ ຈກ-ບສ ລົງວັນທີ 03/01/2024 ວ່າດ້ວຍລາຄາ ເງິນເດືອນຂຸດຄົ້ນ ຢາງພາລາ ປະຈຳເດືອນ 1/2024 ຢູ່ນິຄົມ 1,2,3,4.

+ ແຈ້ງການສະບັບເລກທີ 76/ຈກ-ບສ ລົງວັນທີ 19/02/2024 ວ່າດ້ວຍການຝຶກອົບຮົມກຳມະກອນຂຶດ ຢາງປີ 2024.

- ການຄຸ້ມຄອງທັງໝົດແມ່ນໄດ້ດຳເນີນໄປຢ່າງເປີດເຜີຍ, ປະຊາທິປະໄຕ. ແຕ່ເດືອນ 01/2024 ຫາວັນທີ 31/12/2024, ບໍລິສັດຍັງບໍ່ທັນໄດ້ຮັບການຮ້ອງຮຽນ ກ່ຽວກັບ ຄວາມສະເໝີພາບຍິງ-ຊາຍ ແລະ ສ້າງວຽກເຮັດງານ ທຳ.

**2. ແຜນການ 6 ເດືອນຕົ້ນ ປີ 2025.**

- ຈັດຕັ້ງໂຄສະນາເຜີຍແຜ່ລະບຽບການກົດໝາຍຂອງລັດກ່ຽວກັບສິດ ແລະ ພັນທະຂອງຜູ້ອອກແຮງງານ.

- ສືບຕໍ່ປະຕິບັດກົດລະບຽບວ່າດ້ວຍ ຄວາມສະເໝີພາບຍິງ-ຊາຍ ແລະ ສ້າງວຽກເຮັດງານທຳໃນແຕ່ລະປີ.

- ບໍລິສັດ ໃຫ້ຄວາມສຳຄັນກັບການຕິດຕາມກວດກາ ແລະ ກວດພົບການລະເມີດພາຍໃນດ້ວຍຕົນເອງ. ມີການລົງໂທດສຳລັບກໍລະນີທີ່ລະເມີດ.

ຂ້າງເທິງນີ້ແມ່ນເນື້ອໃນບົດລາຍງານການຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍຄວາມສະເໝີພາບຍິງ-ຊາຍ ແລະ ສ້າງວຽກເຮັດງານທຳຂອງບໍລິສັດໃນ ປີ 2024.

**ຄະນະ FSC ບໍລິສັດ**

*ບ່ອນນຳສົ່ງ:*

- ຄະນະ ອນກ ບສ;
- ບັນດາພາກສ່ວນທີ່ກ່ຽວຂ້ອງ;
- ຄະນະ FSC ບສ
- Website ບສ;
- ສຳເນົາຂາອອກ-ຂາເຂົ້າ.

ບໍລິສັດ ດັກລັກ ຣັບເບີ ຈຳກັດ DAKLAK RUBBER CO.,LTD

ດັ້ງ ດິ່ງ ຟຸ່ງ
**Dang Dinh Phung**